ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັ້ນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ໜັງສືແຈ້ງ

ເລກທີ: 125 /ລອທ

ນະຄອນຫຼວງວຽງຈັນ,ວັນທີ: 04 SEP 2026

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງເລື່ອນເປີດເຜີຍ ເອກະສານລາຍງານການເງິນ ແລະ ບົດລາຍງານຫົກເດືອນຕົ້ນປີ ປະຈຳປີ 2026 ຂອງບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ("ລອທ").

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນ 11 ທັນວາ 2024;
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ຂໍຖືເປັນກຽດແຈ້ງມາໃຫ້ທ່ານຊາບ ກ່ຽວກັບການເລື່ອນເປີດເຜີຍ ບົດລາຍງານການເງິນ ແລະ ບົດລາຍງານຫົກເດືອນຕົ້ນປີ ປະຈຳປີ 2026, ເນື່ອງຈາກວ່າ, ລໍຖ້າການອະນຸມັດ ຫຼື ເອກະສານຢັ້ງຢືນຈາກໜ່ວຍງານພາຍນອກ ເຊັ່ນ: ຜູ້ສະໜອງ, ເພີ່ມປະສິດທິພາບ, ຄວາມຖືກຕ້ອງ ແລະ ຄວາມສົມບູນຂອງຂໍ້ມູນທາງການເງິນ ເພື່ອສະໜອງໃຫ້ແກ່ ບໍລິສັດ ພຣາຍສວໍເຕີເຮົ້າສກຼບເປີສ (ລາວ) ຈຳກັດຜູ້ດຽວ.

ດັ່ງນັ້ນ, ເພື່ອປະກັນໃຫ້ເອກະສານລາຍງານການເງິນ ແລະ ບົດລາຍງານການເງິນຫົກເດືອນຕົ້ນປີ ປະຈຳປີ 2026 ຂອງບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ມີຄວາມຖືກຕ້ອງ ແລະ ຄົບຖ້ວນຕາມມາດຕະຖານ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ເລື່ອນເວລາການເປີດເຜີຍບົດລາຍງານດັ່ງກ່າວອອກໄປກ່ອນ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ຂໍສະແດງຄວາມເສຍໃຈເປັນຢ່າງຍິ່ງຕໍ່ຄວາມຊັກຊ້າໃນຄັ້ງນີ້ ແລະ ຈະເລັ່ງໃສ່ການດຳເນີນງານໃຫ້ແລ້ວຮຽບຮ້ອຍ ເພື່ອເປີດເຜີຍຂໍ້ມູນໃຫ້ສຳເລັດ ບໍ່ເກີນວັນທີ 18 ກັນຍາ 2026.

ດ້ວຍຄວາມນັບຖືເປັນຢ່າງສູງ
ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ